***ໂຮງຮຽນ LOWELL PUBLIC SCHOOLS***
***Henry J. Mroz Administrative Building***
***(ອາຄານໜ່ວຍງານບໍລິຫານ Henry J. Mroz)***
***155 Merrimack Street***
***Lowell, Massachusetts 01852***

*Lisa Van Thiel*
*Early Childhood Coordinator*
***(ຜູ້ປະສານງານເດັກກ່ອນໄວຮຽນ)***
*978-674-2051*
*lvanthiel@lowell.k12.ma.us*

# <u>ຂໍ້ຄວນເອົາໃຈໃສ່</u>

## ໂຮງຮຽນເອກະຊົນ/ຜູ້ປົກຄອງທີ່ໃຫ້ການສຶກສາແກ່ລູກຢູ່ເຮືອນ

## <u>Child Find (ກວດຫາເດັກ)</u>

ໂຮງຮຽນ Lowell Public Schools ມີໜ້າທີ່ຮັບຜິດຊອບໃນການລະບຸຫາເດັກບຸກຄົນໃດກໍຕາມ ຜູ້ທີ່ອາດຈະມີຄວາມພິການ ເຊິ່ງເປັນພົນລະເມືອງຂອງ Lowell ຫຼືບໍ່ກໍຕາມ ຫຼື ເຂົ້າຮັບການສຶກສາໃນໂຮງຮຽນເອກະຊົນພາຍໃນຂອບເຂດທາງພູມສາດຂອງ ເມືອງ Lowell ເຖິງແມ່ນວ່ານັກຮຽນຜູ້ນັ້ນຈະບໍ່ແມ່ນພົນລະເມືອງຂອງ Lowell ກໍຕາມ. ນອກຈາກນີ້ຍັງລວມໄປເຖິງບັນດາ ນັກຮຽນທີ່ໄດ້ຮັບການສຶກສາຈາກຜູ້ປົກຄອງຢູ່ເຮືອນ.

ນອກຈາກນັ້ນ, ໂຮງຮຽນ Lowell Public Schools ຍັງມີໜ້າທີ່ຮັບຜິດຊອບໃນການປະເມີນນັກຮຽນເຫຼົ່ານັ້ນ ເພື່ອກໍານົດວ່າ ພວກເຂົາມີສິດໄດ້ຮັບການສຶກສາພິເສດ ຫຼື ບໍລິການຕ່າງໆທີ່ກ່ຽວຂ້ອງພາຍໃຕ້ກົດໝາຍຂອງລັດຖະບານກາງ, ກົດໝາຍ IDEA (ກົດໝາຍວ່າດ້ວຍການສຶກສາຂອງຜູ້ມີຄວາມພິການ) ຫຼື ກົດໝາຍແຫ່ງລັດ Massachusetts, 603 CMR 28 (ຂໍ້ບັງຄັບວ່າດ້ວຍ ການສຶກສາພິເສດແຫ່ງລັດ Massachusetts).

ຍິ່ງໄປກວ່ານັ້ນ, ໂຮງຮຽນ Lowell Public Schools ຍັງມີຄວາມມຸ່ງໝັ້ນທີ່ຈະລະບຸຫາເດັກກ່ອນວັນເກີດປີທີສາມຂອງພວກເຂົາ ເພື່ອໃຫ້ບໍລິການຊ່ວຍເຫຼືອໄລຍະເລີ່ມຕົ້ນແກ່ເດັກທີ່ມີຄວາມພິການສາມ ແລະ ສີ່ປີ. ຖ້າຫາກທ່ານມີຄໍາຖາມ ຫຼື ຂໍ້ກັງວົນກ່ຽວກັບ ພັດທະນາການຂອງລູກຂອງທ່ານ ແລະ ຕ້ອງການໃຫ້ພວກເຂົາໄດ້ຮັບການກວດຄັດກອງ, ກະລຸນາກອກແບບຟອມ ຄໍາຮ້ອງຂໍຮັບ ການກວດຄັດກອງດ້ານພັດທະນາການ ທາງອອນລາຍ. ການກວດຄັດກອງແມ່ນມີຂຶ້ນຕາມການນັດໝາຍເທົ່ານັ້ນ. ເມື່ອທ່ານໄດ້ສົ່ງ ແບບຟອມອອນລາຍດັ່ງກ່າວແລ້ວ, ສະມາຊິກຂອງເຈົ້າໜ້າທີ່ Early Childhood Department (ພະແນກເດັກກ່ອນໄວຮຽນ) ຈະຕິດຕໍ່ຫາທ່ານ ເພື່ອຕິດຕາມກ່ຽວກັບຄໍາຖາມໃດໆກໍຕາມ ແລະ ທໍາການນັດໝາຍ. ຖ້າທ່ານມີຄໍາຖາມໃດໆ, ກະລຸນາຕິດຕໍ່ Early Childhood Department (ພະແນກເດັກກ່ອນໄວຮຽນ) ທີ່ເບີ 978-674-2050.

ຖ້າຫາກທ່ານສົງໄສວ່າ: ລູກຂອງທ່ານອາດຕ້ອງການໄດ້ຮັບການປະເມີນ ເພື່ອກຳນົດວ່າພວກເຂົາມີສິດໄດ້ຮັບບໍລິການດ້ານການສຶກສາພິເສດ, ທ່ານອາດຈະຮ້ອງຂໍໃຫ້ມີການປະເມີນ, ໂດຍບໍ່ເສຍຄ່າໃຊ້ຈ່າຍ, ມາທາງໂຮງຮຽນ Lowell Public Schools, Special Education Office (ຫ້ອງການດ້ານການສຶກສາພິເສດ). ກະລຸນາສົ່ງຄຳຮ້ອງຂໍຂອງທ່ານໄປທີ່ LPSSpedReferrals@lowell.k12.ma.us. ຖ້າຫາກທ່ານມີຄຳຖາມກ່ຽວກັບຂັ້ນຕອນການປະເມີນ, ກະລຸນາຕິດຕໍ່ Special Education Department (ພະແນກການສຶກສາພິເສດ), ຖະໜົນ 155 Merrimack Street, ຊັ້ນ 5, ເມືອງ Lowell, ລັດ MA ຫຼື ໂທ 978-674-4322.

*ແຈ້ງການນີ້ມີຂຶ້ນຕາມຂໍ້ບັງຄັບຂອງລັດ ແລະ ລັດທະບານກາງໃນການດຳເນີນກິດຈະກຳ Child Find (ກວດຫາເດັກ) ເພື່ອລະບຸຫານັກຮຽນທີ່ອາດຈະຕ້ອງການໄດ້ຮັບການປະເມີນ ເພື່ອກຳນົດວ່າພວກເຂົາມີສິດໄດ້ຮັບການສຶກສາພິເສດຫຼືບໍ່.*